ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຫຼວງພະບາງ

ຄະນະຊີ້ນຳວຽກງານແຂ່ງຂັນ-ຍ້ອງຍໍ

ຮັກຊາດ ແລະ ພັດທະນາ

ເລກທີ 04 /ຈຂ-ຫຼບ

ຫຼວງພະບາງ,ວັນທີ.......12.ມີນາ (3) 2018

**ຄຳແນະນຳ**

**ວ່າດ້ວຍການຄັດເລືອກຜົນງານໃນການຈັດຕັ້ງປະຕິບັດວຽກງານແຂ່ງຂັນ-ຍ້ອງຍໍ**

**ຮັກຊາດ ແລະ ພັດທະນາ**

**ເຖິງ :** ບັນດາທ່ານ ຫົວໜ້າພະແນກການອົງການ, ກົມກອງ, ລັດວິສະຫະກິດ,ສະຖາບັນການສຶກສາຕ່າງໆ, ວິທະຍາໄລ,ໂຮງຮຽນ,ໂຮງໝໍອ້ອມຂ້າງແຂວງ,ເຈົ້າເມືອງ ແລະ ອົງການປົກຄອງບ້ານທົ່ວແຂວງ

**ເລື່ອງ:** ແນະນຳກ່ຽວກັບການຄັດເລືອກຜົນງານໃນການຈັດຕັ້ງປະຕິບັດວຽກງານແຂ່ງຂັນ-ຍ້ອງຍໍ "ຮັກຊາດ ແລະພັດທະນາ"

- ອີງຕາມ : ບົດແນະນຳກ່ຽວກັບການຄັດເລືອກຜົນງານໃນການຈັດຕັ້ງປະຕິບັດວຽກງານແຂ່ງຂັນ-ຍ້ອງຍໍຮັກຊາດ ແລະ ພັດທະນາ ສະບັບເລກທີ 03 /ຄຊຂຍ,ລົງວັນທີ່ 12 /02 /2015
- ອີງຕາມ : ຄຳສັ່ງຂອງທ່ານ ເຈົ້າແຂວງ ສະບັບເລກທີ 08 /ຈຂ-ຫຼບ,ລົງວັນທີ່ 22 ພະຈິກ ວ່າດ້ວຍການຊີ້ນຳ ວຽກງານແຂ່ງຂັນ-ຍ້ອງຍໍ"ຮັກຊາດ ແລະພັດທະນາ"

ເພື່ອເຮັດໃຫ້ການຄັດເລືອກຜົນງານແຂ່ງຂັນ-ຍ້ອງຍໍຮັກຊາດ ແລະ ພັດທະນາຕິດພັນກັບວຽກງານສາມສ້າງຖືກ ຕ້ອງ ສອດຄ່ອງກັບຜົນງານຕົວຈິງຂອງບຸກຄົນ ແລະ ກົມກອງລວມໝູ່ທີ່ໄດ້ປະກອບສ່ວນເຫື່ອແຮງສະຕິປັນຍາເຂົ້າໃນພາລະກິດປົກ ປັກຮັກສາ ແລະ ພັດທະນາປະເທດຊາດເປັນເອກະພາບກັນໃນທົ່ວແຂວງ.

**ປະທານຄະນະຊີ້ນຳ**

**ວຽກງານແຂ່ງຂັນ-ຍ້ອງຍໍ"ຮັກຊາດ ແລະພັດທະນາ"ຂັ້ນແຂວງ**

ອອກຄຳແນະນຳດັ່ງນີ້ :

**I.** ຈຸດປະສົງລະດັບຄາດໝາຍ

1. ເພື່ອເຮັດໃຫ້ການຄັດເລືອກຜົນງານໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ-ຍ້ອງຍໍ"ຮັກຊາດ ແລະ ພັດທະນາໃຫ້ ຖືກຕ້ອງສອດຄ່ອງຕາມຂັ້ນຕອນ ແລະ ຮັບປະກັນໃຫ້ການຍ້ອງຍໍຖືກຕ້ອງຕາມຜົນງານຕົວຈິງ,ຫຼີກເວັ້ນການ ຍ້ອງຍໍແບບສະເລ່ຍຕາມຕຳແໜ່ງ;
2. ເພື່ອເຮັດໃຫ້ບັນດາກົມກອງ,ບຸກຄົນທີ່ດີເດັ່ນສາມາດເສີມຂະຫຍາຍບົດຮຽນຂອງຕົນໄປຫາຜູ້ອື່ນຢ່າງມີ ປະສິດທິພາບ ແລະ ປະສິດທິຜົນສູງ;
3. ການຄັດເລືອກຜົນງານຕ້ອງຮັບປະກັນຄວາມສາມັກຄີເປັນເອກະພາບໃນໝູ່ຄະນະບົນພື້ນຖານຫຼັກການເສີມ ຂະຫຍາຍປະຊາທິປະໄຕ,ມີຄວາມໂປ່ງໃສ,ຍຸຕິທຳ,ຫຼີກເວັ້ນແນວຄິດທັດສະນະ, ແນວຄິດອັກຄະຕິ,ແນວຄິດພັກ

ພວກ, ຈຸ້ມເຈື້ອ ແລະ ອື່ນໆ;

4. ຜ່ານການຄັດເລືອກຜົນງານສາມາດຊອກເຫັນໄດ້ບຸກຄົນ, ກົມກອງລວມໝູ່ທີ່ດີເດັ່ນແທ້ຈິງເປັນແບບຢ່າງຂະບວນການດ້ານຕ່າງໆເຮັດໃຫ້ວຽກງານແຂ່ງຂັນ-ຍ້ອງຍໍ້ອງມີຄຸນນະພາບໃໝ່ດີກວ່າເກົ່າ;

**II. ເປົ້າໝາຍທີ່ຈະໄດ້ຮັບການຍ້ອງຍໍ**

1. ກົມກອງທີ່ດີເດັ່ນ :

ພະແນກການ, ກົມກອງ, ລັດວິສະຫະກິດ, ສະຖາບັນການສຶກສາຕ່າງໆ, ວິທະຍາໄລ, ໂຮງຮຽນ, ໂຮງໝໍອ້ອມຂ້າງແຂວງ, ແລະ ອົງການປົກຄອງບ້ານ ທົ່ວແຂວງ.

2. ປະເພດບຸກຄົນທີ່ດີເດັ່ນ :

ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ຊາວກະສິກອນ, ນັກພັດທະນາກອນ, ກຳມະກອນ ແລະ ປະຊາຊົນບັນດາເຜົ່າ ທີ່ມີຜົນງານດີເດັ່ນໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**III. ລະດັບການຍ້ອງຍໍ**

ກ. ຂັ້ນສູນກາງ

1. ຫຼຽນນາມມະຍົດວິລະຊົນແຮງງານ;
2. ຫຼຽນນາມມະຍົດພັດທະນາດີເດັ່ນແຫ່ງຊາດ;
3. ຫຼຽນໄຊແຮງງານຊັ້ນ I, ຊັ້ນ II, ຊັ້ນ III;
4. ຫຼຽນກາແຮງງານ;
5. ໃບຍ້ອງຍໍລັດຖະບານ.

ຂ. ຂັ້ນແຂວງ

1. ໃບຍ້ອງຍໍທ່ານເຈົ້າແຂວງ

ຄ. ຂັ້ນເມືອງ

1. ໃບຍ້ອງຍໍທ່ານເຈົ້າເມືອງ

**IV. ບັນດາ ມາດຖານເງື່ອນໄຂສຳລັບເປົ້າໝາຍທີ່ຈະໄດ້ຮັບຫຼຽນນາມມະຍົດ, ຫຼຽນໄຊ, ຫຼຽນກາ ແລະ ໃບຍ້ອງຍໍລັດຖະບານ**

ກ່ຽວກັບມາດຖານ ແລະ ເງື່ອນໄຂສຳລັບເປົ້າໝາຍທີ່ຈະໄດ້ຮັບການຍ້ອງຍໍປະເພດຕ່າງໆນັ້ນ ແມ່ນໃຫ້ປະຕິບັດຢ່າງຖືກຕ້ອງຕາມບົດແນະນຳຂອງຄະນະຊີ້ນຳລະດັບຊາດກ່ຽວກັບການແຂ່ງຂັນ-ຍ້ອງຍໍ ເລກທີ 03/ ຄຊຂຍ, ລົງວັນທີ 16/02/2015

**V. ການກຳນົດເວລາ**

1. ພາຍຫຼັງສຳເລັດການເປີດຂະບວນການແຂ່ງຂັນ-ຍ້ອງຍໍຮັກຊາດ ແລະ ພັດທະນາຂັ້ນຂອງຕົນແລ້ວ ຄະນະຮັບຜິດຊອບວຽກງານແຂ່ງຂັນ -ຍ້ອງຍໍແຕ່ລະຂັ້ນ ຕ້ອງມີການກວດກາ, ຕິດຕາມ, ຊຸກຍູ້, ປະເມີນແລະສະຫຼຸບຕີລາຄາການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ-ຍ້ອງຍໍ ໃນທ້າຍເດືອນ 08 ຂອງທຸກໆປີ, ຮອດທ້າຍປີ 2020 ຈະມີການສະຫຼຸບ ແລະ ຍ້ອງຍໍຕາມຄວາມເໝາະສົມ;
2. ບຸກຄົນ, ກົມກອງ ຫຼື ຄອບຄົວທີ່ມີປະກົດການຫຍໍ້ທໍ້ເຊັ່ນ: ມີຢາເສບຕິດຄອບຄອງ, ເສບ, ຄ້າຂາຍຢາເສບຕິດ ຫຼື ປູກຝິ່ນຜ່ານມາຄອບຄົວດັ່ງກ່າວເປັນຄອບຄົວດີເດັ່ນກໍ່ຕາມບໍ່ໃຫ້ເອົາມາຄົ້ນຄ້ວາອີກ;
3. ພະນັກງານ-ລັດຖະກອນເຂົ້າການໃໝ່ ຫຼື ກົມກອງສ້າງຕັ້ງໃໝ່ບໍ່ທັນຮອດ 10 ປີໃຫ້ຄົ້ນຄ້ວາໃບຍ້ອງຍໍລັດຖະບານລົງມາ.

## VI . ວິທີການຄັດເລືອກຜົນງານ

1. ໃຫ້ແຕ່ງຕັ້ງຄະນະຮັບຜິດຊອບຊີ້ນໍາຄົ້ນຄ້ວາການຄັດເລືອກຜົນງານຢູ່ພະແນກການ,ກົມກອງ,ລັດວິສະຫະກິດ,ສະຖາບັນການສຶກສາຕ່າງໆ, ວິທະຍາໄລ,ໂຮງຮຽນ,ໂຮງໝໍອ້ອມຂ້າງແຂວງ,ເມືອງ,ຂະແໜງການ,ອົງການປົກຄອງບ້ານເປັນປະທານ ແລະ ປະກອບພາກສ່ວນທີ່ກ່ຽວຂ້ອງເປັນກໍາມະການໃນທົ່ວແຂວງ;
2. ໃຫ້ຮີບຮ້ອນຈັດຕັ້ງເຜີຍແຜ່ບັນດານິຕິກໍາຕ່າງໆກ່ຽວກັບວຽກງານແຂ່ງຂັນ-ຍ້ອງຍໍເພື່ອໃຫ້ທຸກຄົນຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ,ກໍາແໜ້ນເນື້ອໃນຈິດໃຈ ແລະ ເງື່ອນໄຂ,ມາດຖານ ແຕ່ລະເປົ້າໝາຍທີ່ຈະໄດ້ຮັບການຍ້ອງຍໍ;
3. ການຄັດເລືອກຜົນງານຕ້ອງດໍາເນີນຢ່າງມີປະຊາທິປະໄຕໂດຍມີການຄົ້ນຄ້ວາປຽບທຽບຊັ່ງຊາ,ຫຼີກເວັ້ນການຍ້ອງຍໍຕາມຕໍາແໜ່ງ ຫຼື ຄົ້ນຄ້ວາແບບສະເລ່ຍການຄັດເລືອກຜົນງານຍ້ອງຍໍໃຫ້ເປັນລັກສະນະຮູບທາດ **ໝາຍຄວາມວ່າ:** ລະດັບຂັ້ນລຸ່ມຕ້ອງຫຼາຍກວ່າຂັ້ນເທິງ;ຕົວຢ່າງ:ຍ້ອງຍໍຂັ້ນເມືອງຕ້ອງຫຼາຍກວ່າຂັ້ນແຂວງ,ຍ້ອງຍໍຂັ້ນແຂວງຕ້ອງຫຼາຍກວ່າຍ້ອງຍໍຂັ້ນລັດຖະບານ ສ່ວນຫຼຽນຕ່າງໆໃຫ້ຈັດແຕ່ນ້ອຍຫາໃຫ່ຍຕາມລະດັບຂອງແຕ່ລະປະເພດການຍ້ອງຍໍ ຕ້ອງບົນພື້ນຖານຄວາມສາມັກຄີພາຍໃນຜູ້ໄດ້ຮັບການຍ້ອງຍໍຕ້ອງແມ່ນຜູ້ທີ່ມີຜົນງານຕົວຈິງ ການຄັດເລືອກຕ້ອງເຮັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ເປັນໝູ່ຄະນະ ພາຍຫຼັງສໍາເລັດການຄັດເລືອກ,ຄະນະຮັບຜິດຊອບຄົ້ນຄ້ວາຄັດເລືອກພິຈາລະນາສະເໜີ ຫາຄະນະປະຈໍາຕົກລົງ ແລ້ວສັງລວມແລ້ວສະເໜີຄະນະຮັບຜິດຊອບຊີ້ນໍາຍ້ອງຍໍຂັ້ນແຂວງພິຈາລະນາຕົກລົງ ແລ້ວສັງລວມນໍາສະເໜີຫາຄະນະຊີ້ນໍາລະດັບຊາດຕົກລົງຍ້ອງຍໍຜົນງານຕົວຈິງ;
4. ຄະນະພັກ,ຄະນະນໍາຂັ້ນເມືອງ, ພະແນກການ,ກົມກອງ,ລັດວິສະຫະກິດ,ສະຖາບັນການສຶກສາຕ່າງໆ,ວິທະຍາໄລ,ໂຮງຮຽນ,ໂຮງໝໍອ້ອມຂ້າງແຂວງ,ອົງການປົກຄອງບ້ານທົ່ວແຂວງ ຕ້ອງເປັນເຈົ້າການ ຍົກສູງຄວາມຮັບຜິດຊອບ,ຫຼີກເວັ້ນແນວຄິດຖືເບົາມັກງ່າຍ,ເລືອກຜົນງານແບບສະເລ່ຍ,ຕາມຕໍາແໜ່ງບໍ່ຖືກກັບຜົນງານຕົວຈິງ;
5. ຜ່ານການຈັດຕັ້ງປະຕິບັດຜົນງານຕົວຈິງຖ້າພົບຄວາມຫຸ້ຍງຍາກ ຫຼື ບໍ່ເຂົ້າໃຈບັນຫາໃດໃຫ້ລາຍງານຂໍຄໍາເຫັນຈາກຄະນະຮັບຜິດຊອບຊີ້ນໍາວຽກງານແຂ່ງຂັນຍ້ອງຍໍຂັ້ນແຂວງ ຫຼື ພະແນກພາຍໃນແຂວງ./

ເຈົ້າແຂວງ ຫຼວງພະບາງ

ປະທານຄະນະຊີ້ນໍາ

ວຽກງານແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະພັດທະນາ ຂັ້ນແຂວງ

ຄໍາຂັນ ຈັນທະວິສຸກ